## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສຳນັກງານນາຍົກລັດຖະມົນຕີ

ເລກທີ 149 /ນຍ

*ນະຄອນຫຼວງວຽງຈັນ, ວັນທີ 10.ພຶດສະພາ.2007*

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ການຕົກລົງເຫັນດີ ຂອງ ລັດຖະບານ ວ່າດ້ວຍການສ້າງຕັ້ງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ໃນກອງປະຊຸມລັດຖະບານ ປະຈຳເດືອນຕຸລາ 2006;
- ອີງຕາມ ໃບສະເໜີ ຂອງ ທ່ານຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ ........../ທປລ. ກພລ, ລົງວັນທີ ..... ເມສາ 2007

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດຳລັດ:**

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການດັ່ງກ່າວ ແນໃສ່ຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມໃຫ້ຍືນຍົງ ປະກອບສ່ວນເຮັດໃຫ້ເສດຖະກິດ-ສັງຄົມແຫ່ງຊາດ ມີການພັດທະນາທີ່ໝັ້ນຄົງ.

ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຂຽນຫຍໍ້ວ່າ: "ອ.ນ.ສ" ແມ່ນພະນວງໜຶ່ງທີ່ສັງກັດໃນໂຄງປະກອບກົງຈັກການຈັດຕັ້ງ ຂອງ ສຳນັກງານນາຍົກລັດຖະມົນຕີ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກ ກ່ຽວກັບວຽກງານຊັບພະຍາກອນນ້ຳ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ ໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່

3.1 ຄົ້ນຄວ້າ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ ແລະ ນິຕິກຳຕ່າງໆ ຂອງພັກ, ລັດວາງອອກ ທີ່ພົວພັນເຖິງຊັບພະຍາກອນນ້ຳ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ;

3.2 ຄົ້ນຄວ້າຮ່າງ ແລະ ນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາບັນດາຮ່າງແຜນນະໂຍບາຍ, ຍຸດທະສາດ, ແຜນແມ່ບົດ, ແຜນການໄລຍະຍາວ, ກົດໝາຍ, ລັດຖະບັນຍັດ, ດຳລັດ ແລະ ມາດຕະຖານກຳນົດໝາຍຕ່າງໆ ທີ່ພົວພັນເຖິງວຽກງານຊັບພະຍາກອນນ້ຳ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ. ຊີ້ນຳ, ແນະນຳການຈັດຕັ້ງປະຕິບັດບັນດານິຕິກຳດັ່ງກ່າວພາຍຫຼັງຖືກຮັບຮອງເອົາແລ້ວ;

3.3 ຄົ້ນຄວ້າສ້າງ ແລະ ນຳສະເໜີປັບປຸງບັນດານິຕິກຳ ແລະ ລະບຽບການຕ່າງໆ ທີ່ພົວພັນກັບວຽກງານຊັບພະຍາກອນນ້ຳ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ ທີ່ເຫັນວ່າບໍ່ທັນຄົບຖ້ວນ ຫລື ບໍ່ສອດຄ່ອງກັບສະພາບການພັດທະນາເສດຖະ ກິດ-ສັງຄົມໃນແຕ່ລະໄລຍະ;

3.4 ສ້າງແຜນການຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແບບຍືນຍົງ ເພື່ອນຳສະເໜີລັດຖະບານພິຈາລະນາອະນຸມັດ; ສົ່ງເສີມການສຶກສາ, ຄົ້ນຄວ້າວິທະຍາສາດ, ສ້າງຈິດສຳນຶກໃນທົ່ວສັງຄົມໃຫ້ຮູ້ອະນຸລັກຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ; ກວດ ຜ່ານ, ຢັ້ງຢືນ ແລະ ຮັບຮອງເອົາບົດລາຍງານການປະເມີນຜົນກະທົບ ຕໍ່ ສິ່ງແວດລ້ອມ ແລະ ສັງຄົມກ່ອນການອະນຸມັດໃຫ້ດຳເນີນໂຄງການພັດທະນາ ແລະ ກິດຈະການຕ່າງໆ; ພົວພັນປະສານງານກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ເພື່ອຮັບປະກັນໃຫ້ການພັດທະນາໄປຄຽງຄູ່ກັບການປົກປັກຮັກສາຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ໃນຂອບເຂດທົ່ວປະເທດ;

3.5 ຄຸ້ມຄອງ, ຕິດຕາມ, ກວດກາ, ເກັບກຳ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບຊັບພະຍາກອນນ້ຳ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ ໃນຂອບເຂດທົ່ວປະເທດ;

3.6 ຄົ້ນຄວ້າ, ເລືອກເຟັ້ນເອົາວິທະຍາສາດ, ເຕັກໂນໂລຊີທີ່ເໝາະສົມ ເພື່ອນຳໃຊ້ເຂົ້າໃນວຽກງານການຄຸ້ມຄອງຊັບພະຍາກອນນ້ຳ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ;

3.7 ຊີ້ນໍາ, ກວດກາການຈັດຕັ້ງປະຕິບັດມາດຕະການຕ່າງໆ ໃນການປົກປັກຮັກສາສິ່ງແວດລ້ອມ, ການຈັດຕັ້ງປະຕິບັດບັນດາໂຄງການປ້ອງກັນ, ຕ້ານການເສື່ອມໂຊມ, ການເກີດມົນລະພິດທາງອາກາດ ແລະ ການເກີດອຸບັດຕິເຫດທາງດ້ານສິ່ງແວດລ້ອມ;

3.8 ຊີ້ນໍາ, ຈັດຕັ້ງປະຕິບັດການສໍາຫຼວດຂັ້ນພື້ນຖານການເກັບກໍາຕິລາຄາບັນດາປັດໄຈຂໍ້ມູນຕ່າງໆ ພ້ອມທັງພະຍາກອນ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບຊັບພະຍາກອນນໍ້າ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ ໃນແຕ່ລະໄລຍະ ຫລື ໃນແຕ່ລະວັນ;

3.9 ກວດຜ່ານ, ຢັ້ງຢືນຂໍ້ມູນຂ່າວສານ, ເຕັກນິກ ກ່ຽວກັບຊັບພະຍາກອນນໍ້າ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ ສໍາລັບໂຄງການພັດທະນາ ຫລື ໂຄງການກໍ່ສ້າງພື້ນຖານຕ່າງໆ;

3.10 ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຄໍາສະເໜີ, ຄໍາຮ້ອງຟ້ອງ, ຄໍາຮ້ອງທຸກຂອງປະຊາຊົນ ແລະ ພາກສ່ວນຕ່າງໆ ກ່ຽວກັບບັນຫາຊັບພະຍາກອນນໍ້າ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ;

3.11 ຄຸ້ມຄອງ ແລະ ນໍາໃຊ້ງົບປະມານລັດ, ເງິນຊ່ວຍເຫຼືອ ແລະ ເງິນລາຍຮັບວິຊາການຢ່າງມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ;

3.12 ສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາຊັບພະຍາກອນມະນຸດ, ຊັບພະຍາກອນນໍ້າ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ; ສະເໜີປັບປຸງໂຄງປະກອບການຈັດຕັ້ງ ໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງວຽກງານໃນແຕ່ລະໄລຍະ ແລະ ສະເໜີເລື່ອນຊັ້ນ, ຂັ້ນ, ຍ້ອງຍໍ ຫຼື ປະຕິບັດວິໄນ ຕໍ່ ພະນັກງານ-ລັດຖະກອນ ຕາມລະບຽບກົດໝາຍ;

3.13 ໃຫ້ລາງວັນແກ່ບຸກຄົນ ຫຼື ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການປົກປັກຮັກຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ. ພິຈາລະນາຕົກລົງນໍາໃຊ້ມາດຕະການ ຫຼື ສະເໜີອົງການທີ່ມີສິດອໍານາດຕົກລົງນໍາໃຊ້ມາດຕະການທີ່ເໝາະສົມ ຕໍ່ ບຸກຄົນ ຫຼື ນິຕິບຸກຄົນ ທີ່ດໍາເນີນໂຄງການ ຫຼື ມີການເຄື່ອນໄຫວ ທີ່ກໍ່ໃຫ້ເກີດຜົນກະທົບທາງລົບ ຕໍ່ ຊັບພະຍາກອນນໍ້າ, ສິ່ງແວດລ້ອມ ແລະ ສັງຄົມ;

3.14 ພົວພັນ, ຍາດແຍ່ງການຊ່ວຍເຫຼືອ ແລະ ຮ່ວມມືກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອຄຸ້ມຄອງ ແລະ ພັດທະນາ ດ້ານຊັບພະຍາກອນນໍ້າ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ;

3.15 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງ ລັດຖະບານ.

**ມາດຕາ 4. ຂອບເຂດສິດ**

4.1 ອອກຂໍ້ຕົກລົງ, ຄໍາສັ່ງ, ບົດແນະນໍາ, ແຈ້ງການ ແລະ ລະບຽບການຕ່າງໆ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍ ແລະ ນິຕິກໍາຕ່າງໆ ທີ່ກ່ຽວຂ້ອງກັບຊັບພະຍາກອນນໍ້າ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ;

4.2 ອອກ ຫຼື ຖອນໃບອະນຸຍາດ ດໍາເນີນກິດຈະການຕ່າງໆ ທີ່ກ່ຽວຂ້ອງກັບຊັບພະຍາກອນນໍ້າ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ; ຕິດຕາມ, ກວດກາ, ກ່າວເຕືອນ ຫຼື ນໍາໃຊ້ມາດຕະການຕ່າງໆ ຕໍ່ ການຈັດຕັ້ງ ຫຼື ບຸກຄົນ ທີ່ສ້າງຜົນກະທົບທາງລົບ ຕໍ່ ຊັບພະຍາກອນນໍ້າ, ສິ່ງແວດລ້ອມ, ພື້ນຖານໂຄງລ່າງອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ;

4.3 ເກັບຄ່າທຳນຽມ ແລະ ຄ່າບໍລິການ ດ້ານຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຕາມລະບຽບກົດໝາຍວາງອອກ; ສ້າງຕັ້ງກອງທຶນປົກປັກຮັກສາ, ຟື້ນຟູບູລະນະ ແລະ ສົ່ງເສີມວຽກງານການຄຸ້ມຄອງຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຕາມການອະນຸມັດຂອງລັດຖະບານ;

4.4 ສ້າງຕັ້ງ, ຍຸບເລີກ ແລະ ປັບປຸງກົງຈັກການຈັດຕັ້ງ; ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ເລື່ອນຊັ້ນ, ຂັ້ນ, ວ່າຈ້າງຊ່ຽວຊານ ຫຼື ແຮງງານຊົ່ວຄາວ, ປະຕິບັດວິໄນ ແລະ ປະຕິບັດນະໂຍບາຍອື່ນໆ ຕໍ່ພະນັກງານຂັ້ນຕ່າງໆ ຂອງຕົນ ບົນພື້ນຖານລະບຽບການຂອງການແບ່ງຂັ້ນຄຸ້ມຄອງ;

4.5 ກໍ່ສ້າງ, ບຳລຸງຍົກລະດັບດ້ານວິຊາການກ່ຽວກັບຄຸ້ມຄອງຊັບພະຍາກອນນ້ຳ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ ໃຫ້ແກ່ພະນັກງານ-ລັດຖະກອນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;

4.6 ຄຸ້ມຄອງ ແລະ ນຳໃຊ້ງົບປະມານຕາມແຜນການ ທີ່ໄດ້ຮັບການອະນຸມັດຈາກລັດຖະບານ ແລະ ນຳໃຊ້ລາຍຮັບວິຊາການຕາມລະບຽບການ ທີ່ລັດຖະບານວາງອອກ;

4.7 ເຂົ້າຮ່ວມກອງປະຊຸມທຸກລະດັບ ທັງພາຍໃນ ແລະ ຕ່າງປະເທດ; ເຈລະຈາ, ເຊັນສັນຍາ, ສົນທິສັນຍາ, ອານຸສັນຍາ, ບົດບັນທຶກຄວາມເຂົ້າໃຈ ກັບ ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ທີ່ພົວພັນເຖິງຊັບພະຍາກອນນ້ຳ, ສິ່ງແວດລ້ອມ, ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ ຕາມການມອບໝາຍຈາກລັດຖະບານ;

4.8 ປະຕິບັດພັນທະສາກົນ ດ້ານຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ທີ່ ສ.ປ.ປ. ລາວ ໄດ້ເຂົ້າເປັນພາຄີ ແລະ ສະມາຊິກ. ສະເໜີເຂົ້າເປັນພາຄີ ຫລື ສະມາຊິກ ຂອງສົນທິສັນຍາ ຫລື ຂໍ້ຕົກລົງຕ່າງໆ ຂອງສາກົນຕາມຄວາມເໝາະສົມ;

4.9 ປະຕິບັດສິດອື່ນໆ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບກົງຈັກ

**5.1 ຂັ້ນສູນກາງ ປະກອບມີ:**

1. ຫ້ອງການ;
2. ກົມ ຊັບພະຍາກອນນ້ຳ;
3. ກົມ ສິ່ງແວດລ້ອມ;
4. ກົມ ອຸຕຸນິຍົມວິທະຍາ ແລະ ອຸທົກກະສາດ;
5. ສະຖາບັນ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ;
6. ກອງເລຂາ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວ.

**5.2 ຂັ້ນທ້ອງຖິ່ນ ປະກອບມີ:**

- ຫ້ອງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແຂວງ, ນະຄອນ;
- ໜ່ວຍງານ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ ;

ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຊີ້ນຳດ້ານເຕັກນິກ-ວິຊາການ ຕໍ່ ບັນດາ ຫ້ອງການ, ຂະແໜງ ແລະ ໜ່ວຍງານຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ.

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

**6.1** ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີຫົວໜ້າ 01 ທ່ານ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ. ຫົວໜ້າ ອ.ນ.ສ ເປັນຜູ້ຮັບຜິດຊອບ ຕໍ່ ລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍ ແລະ ລະບຽບກົດໝາຍຂອງພັກ-ລັດ ແລະ ໜ້າທີ່, ຂອບເຂດສິດຂອງ ອ.ນ.ສ ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 3 ແລະ 4 ຂອງດຳລັດສະບັບນີ້; ໃນກໍລະນີຫົວໜ້າ ອ.ນ.ສ ໄປເຄື່ອນໄຫວວຽກງານທາງໄກ ຫຼື ຕິດຂັດວຽກງານ, ຫົວໜ້າ ອ.ນ.ສ ຈະຕ້ອງມອບສິດເປັນລາຍລັກອັກສອນ ໃຫ້ຮອງ ຫົວໜ້າ ອ.ນ.ສ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ;

**6.2** ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີຮອງຫົວໜ້າ ອ.ນ.ສ; ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງ ຫົວໜ້າ ອ.ນ.ສ; ຮອງຫົວໜ້າ ອ.ນ.ສ ເປັນຜູ້ຊ່ວຍຫົວໜ້າ ອ.ນ.ສ ແລະ ຮັບຜິດຊອບຂົງເຂດວຽກງານໃດໜຶ່ງ ຕາມການແບ່ງງານ ຂອງ ຫົວໜ້າ ອ.ນ.ສ.

**6.3** ອ.ນ.ສ ຍັງປະກອບມີ ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະຖາບັນ, ພະນັກງານວິຊາການ ແລະ ພະນັກງານບໍລິຫານຮັບໃຊ້ຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍຫົວໜ້າ ອ.ນ.ສ.

## ໝວດທີ IV
## ແບບແຜນວິທີເຮັດວຽກ

**ມາດຕາ 7. ຫຼັກການ ແລະ ວິທີການ**

ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເຄື່ອນໄຫວວຽກງານຕາມຫຼັກການດັ່ງນີ້:

**7.1** ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບແຜນການ, ການຈັດຕັ້ງ ແລະ ການພົວພັນ, ຮ່ວມມືກັບຕ່າງປະເທດ. ປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ;

**7.2** ທຸກການເຄື່ອນໄຫວວຽກງານ ຂອງ ອ.ນ.ສ ແມ່ນອີງໃສ່ກົດໝາຍ ແລະ ລະບຽບຫຼັກການລວມຂອງລັດຖະບານ ໂດຍນຳເອົາແນວທາງຂອງພັກ, ນະໂຍບາຍຂອງລັດຖະບານ ມາຜັນຂະຫຍາຍເປັນອັນລະອຽດ ໃນແຕ່ລະໄລຍະ;

**7.3** ພົວພັນ, ປະສານສົມທົບກັບອົງການບໍລິຫານລັດຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ. ນຳສະເໜີຂໍການເຫັນດີຈາກຂັ້ນເທິງທີ່ກ່ຽວ

ຂ້ອງ ກ່ຽວກັບການສ້າງຕັ້ງ, ຍຸບເລີກກົງຈັກການຈັດຕັ້ງ ແລະ ການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ບຸກຄະລາກອນຂັ້ນກົມ ຫຼື ທຽບເທົ່າຂຶ້ນເມືອ ກ່ອນຈະຜັນຂະຫຍາຍເປັນນິຕິກຳຂອງລັດ ເພື່ອຈັດຕັ້ງປະຕິບັດ;

7.4 ປະຕິບັດລະບອບປະຊຸມສ່ອງແສງລາຍງານ, ສະຫຼຸບກວດກາການເຄື່ອນໄຫວວຽກງານ ປະຈຳເດືອນ, ໄຕມາດ (ງວດ), 06 ເດືອນ, ປີ ແລະ ແຕ່ລະໄລຍະ ເພື່ອລາຍງານຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ກາປະທັບ**

ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີງົບປະມານ ແລະ ກາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານ ທາງລັດຖະການ.

**ມາດຕາ 9. ການຜັນຂະຫຍາຍ**

ມອບໃຫ້ຫົວໜ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ ຜັນຂະຫຍາຍກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ບັນດາການຈັດຕັ້ງທີ່ກຳນົດຢູ່ໃນມາດຕາ 5 ຂອງດຳລັດສະບັບນີ້ ຢ່າງລະອຽດ ແລະ ຈະແຈ້ງ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

ບົວສອນ ບຸບຜາວັນ